ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ເມືອງສີໂຄດຕະບອງ

ເລກທີ 623 /ຈມ.ສບ
ວັນທີ 09.07.2024

ຂາເຂົ້າ ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 3217
ວັນທີ: 15.7.2024

# ໜັງສືລາຍງານ

**ຮຽນ:** ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1013/ຫວນວ, ລົງວັນທີ 08 ມິຖຸນາ 2023 ເລື່ອງ: ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ IV ໝວດທີ 4 ມາດຕາ 39, 40 ວ່າດ້ວຍພາລະບົດບາດ, ສິດ ແລະ ໜ້າທີ່ຂອງເຈົ້າເມືອງ;
- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1013 ຫວນວ. ລົງວັນທີ 08 ມິຖຸນາ 2023.
- ອີງຕາມ ບົດບັນທຶກ ກອງປະຊຸມປຶກສາຫາລືກ່ຽວກັບ ເລື່ອງ: ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ຄັ້ງວັນທີ 20 ມິຖຸນາ 2024.

**ເມືອງສີໂຄດຕະບອງ** ຂໍຖືເປັນກຽດຮຽນລາຍງານມາຍັງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ຮັບຊາບ: ໂດຍປະຕິບັດຕາມ ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1013/ຫວນວ, ລົງວັນທີ 08 ມິຖຸນາ 2023 **ເລື່ອງ:** ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ.

ໃນວັນທີ 20 ມິຖຸນາ 2024 ຢູ່ທີ່ຫ້ອງວ່າການເມືອງສີໂຄດຕະບອງ ໄດ້ເປີດກອງປະຊຸມປຶກສາຫາລືກ່ຽວ ກັບ ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1013/ຫວນວ, ລົງວັນທີ 08 ມິຖຸນາ 2023, **ເລື່ອງ:** ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ໃນເນື້ອທີ່ດິນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ. ໂດຍການເປັນປະທານຂອງ**ທ່ານ ທົງ ທິດທິລາດ** ຮອງເຈົ້າເມືອງສີໂຄດຕະບອງ ແລະ ມີພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຄື: ທ່ານ ບຸນເພີ່ມ ສີສຸພັນທະວົງ ວິຊາການ ຂອງພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ນະຄອນຫຼວງວຽງຈັນ, ທ່ານ ສັນຕິໄຊ ສັນຕິລາດ ຫົວໜ້າຫ້ອງການກະສິກຳ ແລະ ປ່າໄມ້ເມືອງ, ທ່ານ ໄຊຍະເພັດ ມາລີຈັນສີ ຮອງຫົວໜ້າຫ້ອງວ່າການ, ທ່ານ ນາງ ລັດດາວັນ ວົງພະຈັນ ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ, ທ່ານ ສຸລິຍະ ສຸພັນທະວົງ ຮອງປະທານກວດລັດເມືອງ ແລະ ທ່ານ ທັດສະພອນ ຫຼວງຫຼາດ ນາຍບ້ານ ໂນນສະຫວ່າງ ເມືອງສີໂຄດຕະບອງ ກໍ່ໄດ້ເຂົ້າຮ່ວມ.

**ຜ່ານການປຶກສາຫາລືປະທານກອງຊຸມ, ຄະນະກຳມະການທີ່ກ່ຽວຂ້ອງ ແລະ ບ້ານ ໂນນສະຫວ່າງ ໄດ້ເຫັນດີເປັນເອກະພາບຕໍ່ ກັບ ເລື່ອງ: ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີດັ່ງນີ້:**

**1.** ດິນຕອນດັ່ງກ່າວ ແມ່ນພໍ່ຕູ້ຈານຈູມ ເປັນຜູ້ຈັບຈອງ ແລະ ຄຸ້ມຄອງໃນເມື່ອກ່ອນ ແລະ ໄດ້ແບ່ງໃຫ້ທ້າວ ບຸນສອຍ ໜ່ອຍມະນີ ເຂົ້າຄຸ້ມຄອງນຳໃຊ້ ໂດຍບໍ່ມີເອກະສານໃນຊ່ວງໄລຍະປີ 1973 ເປັນຕົ້ນມາ. ໃນປີ 2013 ຫາ 2014 ໂຄງການພັດທະນາໜອງອໍ້ ຈຶ່ງໄດ້ປັກຫຼັກໝາຍຂອບເຂດເນື້ອທີ່ໂຄງການ. ສ່ວນຂອບເຂດເນື້ອທີ່ຕອນດິນ 6.987 ຕາແມັດ ຂອງທ້າວ ບຸນສອຍ ໜ່ອຍມະນີ ໃນໄລຍະນັ້ນ, **ເຫັນວ່າ:** ບໍ່ທັນມີສິ່ງປຸກສ້າງປະເພດໃດເທື່ອ (ເຮືອນ 02 ຫຼັງບໍ່ທັນໄດ້ປຸກເທື່ອ).

**2.** ໃນປີ 2016 ບໍລິສັດຫົວມັງກອນ (ຜູ້ສຳປະທານ) ໄດ້ມອບເງິນຊົດເຊີຍໃຫ້ ກັບ ທ້າວ ສາຍສະໝອນ ໜ່ອຍມະນີ ຜູ້ເປັນອ້າຍ ຂອງນາງ ວຽງເງິນ ໜ່ອຍມະນີ ທີ່ໄດ້ຮັບມອບສິດມາຮັບເງິນແທນທ້າວ ບຸນສອຍ ໜ່ອຍມະນີ (ຜູ້ເປັນພໍ່) ໃນຄັ້ງວັນທີ 27 ເມສາ 2016 ຈຳນວນ: 38.044.215 ກີບ ໃຫ້ເຈົ້າຂອງເນື້ອທີ່ດິນຕາມລະບຽບກົດໝາຍເປັນທີ່ຮຽບຮ້ອຍແລ້ວ ຖືວ່າພວກກ່ຽວກໍ່ຮັບຮູ້ກ່ຽວກັບການເສຍສິດໃນເນື້ອທີ່ດິນຕອນດັ່ງກ່າວແລ້ວ. ຕໍ່ມາໃນປີ 2018 ທ້າວ ບຸນສອຍ ໜ່ອຍມະນີ ໄດ້ມອບເນື້ອທີ່ຕອນດິນ 6.987 ຕາແມັດ ໃຫ້ນາງ ວຽງເງິນ ໜ່ອຍມະນີ (ຜູ້ເປັນລູກສາວ) ເຂົ້າຄຸ້ມຄອງນຳໃຊ້ຕອນດິນດັ່ງກ່າວ ໂດຍບໍ່ມີເອກະສານ ແລະ ໄດ້ປຸກເຮືອນ ຈຳນວນ 2 ຫຼັງ ຄື: ຫຼັງທີ1 ເນື້ອທີ່ 4×12 ຕາແມັດ ແລະ ຫຼັງທີ2 ເນື້ອທີ່ 4×9 ຕາແມັດ.

**3.** ຕໍ່ກັບບັນຫາ ເລື່ອງ: ຂໍພິຈາລະນາຄືນໃໝ່ ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ໃນເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ **ເຫັນວ່າ:** ເນື້ອທີ່ຕອນດິນດັ່ງກ່າວ ໄດ້ອອກໃບຕາດິນລັດຄຸ້ມຄອງແລ້ວ ສະບັບເລກທີ 322 ລົງວັນທີ 10 ກຸມພາ 2021 ຕາມເນື້ອທີ່ດິນທັງໝົດ: 235.708 ຕາແມັດ ແລະ ພວກກ່ຽວກໍ່ຮັບຮູ້ກ່ຽວກັບການເສຍສິດໃນເນື້ອທີ່ຕອນດິນ ຈຳນວນ 6.987 ຕາແມັດ ໃນປີ 2016 ທີ່ໂຄງການໄດ້ມອບເງິນຊົດເຊີຍໄປແລ້ວ.

**ທັດສະນະຂອງເມືອງສີໂຄດຕະບອງ ກ່ຽວກັບ ໜັງສືທາງລັດຖະການ ຂອງຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1013/ຫວນວ, ລົງວັນທີ 08 ມິຖຸນາ 2023 ເລື່ອງ: ຂໍການພິຈາລະນາຄືນໃໝ່ໃນການຮັບຮູ້ສິດນຳໃຊ້ທີ່ດິນຕາມປະເພນີ ເນື້ອທີ່ດິນ ຈຳນວນ 6.987 ຕາແມັດ ຢູ່ເຂດພັດທະນາໜອງອໍ້ ເມືອງສີໂຄດຕະບອງ ນະຄອນຫຼວງວຽງຈັນ ມີດັ່ງນີ້:**

ໃນຊ່ວງປີ 2004 ໂຄງການອອກໃບຕາດິນ ທົ່ວເມືອງສີໂຄດຕະບອງ ທ້າວ ບຸນສອຍ ໜ່ອຍມະນີ ບໍ່ໄດ້ມາແຈ້ງສິດນຳໃຊ້ດິນ (ບໍ່ມີເອກະສານ) ມາເຖິງ ປີ 2018 ທ້າວ ບຸນສອຍ ໜ່ອຍມະນີ ໄດ້ມອບເນື້ອທີ່ຕອນດິນ 6.987 ຕາແມັດ ໃຫ້ນາງ ວຽງເງິນ ໜ່ອຍມະນີ (ຜູ້ເປັນລູກສາວ) ເຂົ້າຄຸ້ມຄອງນຳໃຊ້ຕອນດິນດັ່ງກ່າວ ໂດຍບໍ່ມີເອກະສານເຊັ່ນດຽວກັນ ແລະ ເນື້ອທີ່ຕອນດິນດັ່ງກ່າວ ໄດ້ອອກໃບຕາດິນລັດຄຸ້ມຄອງແລ້ວ ສະບັບເລກທີ 322 ລົງວັນທີ 10 ກຸມພາ 2021 ຕາມເນື້ອທີ່ດິນທັງໝົດ: 235.708 ຕາແມັດ.

ຖ້າຈະພິຈາລະນາ ຕາມກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019. ພາກທີ VIII ການໄດ້ຮັບສິດ, ສິດ ແລະ ພັນທະ, ການເສຍສິດ ແລະ ສິ້ນສຸດສິດນຳໃຊ້ທີ່ດິນໝວດທີ1 ການໄດ້ຮັບສິດນຳໃຊ້ທີ່ດິນ **ມາດຕາ 130** (ໃໝ່) ການໄດ້ສິດນຳໃຊ້ທີ່ດິນຕາມປະເພນີ **ເຫັນວ່າ:** ຜູ້ກ່ຽວແມ່ນເສຍສິດ ແລະ ສິ້ນສຸດສິດນຳໃຊ້ທີ່ດິນໄປແລ້ວ ໂດຍອີງຕາມ ກົດໝາຍວ່າດ້ວຍທີ່ດິນ ສະບັບປັບປຸງ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019. ພາກທີ **I** ບົດບັນຍັດທົ່ວໄປ **ມາດຕາ 3** (ປັບປຸງ) ກຳມະສິດກ່ຽວກັບທີ່ດິນ **ວັກທີ1:** ທີ່ດິນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຕົວແທນເຈົ້າກຳມະສິດດັ່ງກ່າວ ແລະ ຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມີການຈັດສັນ, ວາງແຜນການນຳໃຊ້ ແລະ ພັດທະນາທີ່ດິນ ແລະ **ມາດຕາ 147** (ປັບປຸງ) ການສິ້ນສຸດສິດນຳໃຊ້ທີ່ດິນ **ຂໍ້ 2**: ໂອນສິດນຳໃຊ້ທີ່ດິນຄືນເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດ ຫຼື ໂຄງການພັດທະນາຂອງລັດ. **ຖືວ່າ**: ພວກກ່ຽວກໍ່ຮັບຮູ້ກ່ຽວກັບການເສຍສິດໃນເນື້ອທີ່ຕອນດິນ ຈຳນວນ 6.987 ຕາແມັດ ໃນປີ 2016 ທີ່ໂຄງການໄດ້ມອບເງິນຊົດເຊີຍໄປແລ້ວ.

ດັ່ງນັ້ນ, ຈຶ່ງເຮັດໜັງສືລາຍງານ ຮຽນມາຍັງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ເພື່ອຊາບ ແລະ ໃຫ້ທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

**ເຈົ້າເມືອງສີໂຄດຕະບອງ**

ນະຄອນຫລວງວຽງຈັນ ເຈົ້າເມືອງ ເມືອງສີໂຄດຕະບອງ

ທະວີໄຊ ເພົາຊົມພູ